**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະສະເພາະກິດ ເພື່ອການປ້ອງກັນ
ແລະ ຄວບຄຸມພະຍາດCOVID-19 ຂັ້ນແຂວງ

ເລກທີ 59...../ຄສກ
ອັດຕະປື, ວັນທີ 28 ທັນວາ 2020.

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກຊ-ປກສ ແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ອົງການທຽບເທົ່າອ້ອມຂ້າງແຂວງ, ຄະນະຄຸ້ມຄອງດ່ານສາກົນພູເກືອ.

- ທ່ານ ເຈົ້າເມືອງ 05 ຕົວເມືອງ.
- ພະນັກງານ, ລັດຖະກອນ, ທະຫານ, ຕໍາຫຼວດ, ກໍາມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວບັນດາເຜົ່າ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດທີ່ດໍາລົງຊີວິດຢູ່ແຂວງອັດຕະປື.

ເລື່ອງ: ການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ ແລະ ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ ວັນທີ 28 ທັນວາ 2020 ຫາ 31 ມັງກອນ 2021 ຢູ່ແຂວງອັດຕະປື.

- ອີງຕາມ: ຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.
- ອີງຕາມ: ຄໍາສັ່ງແນະນໍາຂອງແຂວງ ສະບັບເລກທີ 12 /ຈຂອປ ອັດຕະປື, ລົງວັນທີ 10 ສິງຫາ 2020.
- ອີງຕາມ: ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1414/ຫສນຍ, ນະຄອນຫຼວງວຽງຈັນ ລົງວັນທີ 31 ທັນວາ 2020.

ເນື່ອງຈາກວ່າ ສະພາບການລະບາດຂອງພະຍາດ COVID-19 ກໍາລັງເປັນໄພຄຸກຄາມຕໍ່ໂລກ, ຕໍ່ປະເທດ ແລະ ແຂວງອັດຕະປື ຂອງພວກເຮົາ, ພະຍາດດັ່ງກ່າວ ຍັງບໍ່ທັນມີທ່າອ່ຽງຫຼຸດລົງ ແລະ ບາງປະເທດຍັງມີການລະບາດອີກຮອບໃໝ່, ສິ່ງທີ່ເປັນອັນຕະລາຍຮ້າຍແຮງໄປກວ່ານັ້ນ ໄດ້ຮັບຂໍ້ມູນຈາກນັກວິທະຍາສາດການແພດໃນໂລກໃຫ້ຮູ້ວ່າ: ພະຍາດ COVID-19 ໄດ້ມີການກາຍພັນທີ່ຮ້າຍແຮງຂຶ້ນກວ່າເກົ່າ, ການແຜ່ເຊື້ອຈະມີຄວາມໄວຂຶ້ນ ແລະ ສະຫຼັບຊັບຊ້ອນກວ່າສາຍພັນເດີມ, ການກວດເຫັນຜູ້ຕິດເຊື້ອໃນປະຈຸບັນນີ້ ສ່ວນຫຼາຍແມ່ນບໍ່ມີອາການສະແດງ ເຊິ່ງເຮັດໃຫ້ການປ້ອງກັນ, ຄວບຄຸມພະຍາດດັ່ງກ່າວ ຍິ່ງເພີ່ມຄວາມຫຍຸ້ງຍາກຊັບຊ້ອນຂຶ້ນຕື່ມ, ສະນັ້ນຈຶ່ງຮຽກຮ້ອງມາຍັງທຸກພາກສ່ວນ ຈົ່ງເພີ່ມສະຕິລະວັງຕົວໃຫ້ສູງຂຶ້ນກວ່າເກົ່າ; ເຊິ່ງມາດຕະການຜ່ອນຜັນ ໄລຍະ 28 ທັນວາ 2020 ຫາ 31 ມັງກອນ 2021 ມີດັ່ງນີ້: ✓

1. ໃຫ້ບັນດາພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ, ເມືອງ 5 ເມືອງ, ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ, ປະຊາຊົນບັນດາເຜົ່າ, ຄົນຕ່າງປະເທດທີ່ອາໄສຢູ່ແຂວງອັດຕະປື ເພີ່ມສະຕິລະວັງຕົວໃຫ້ສູງຂຶ້ນກວ່າເກົ່າ, ຍົກສູງຄວາມຮັບຜິດຊອບໃນການຕິດຕາມ, ເຝົ້າລະວັງໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ດ້ວຍຄວາມເປັນເຈົ້າການສູງ, ປະຕິບັດຢ່າງເຂັ້ມງວດຕໍ່ບັນດາມາດຕະການປ້ອງກັນການຕິດເຊື້ອ ຕາມຄຳແນະນຳ ຂອງຄະນະສະເພາະກິດວາງອອກ.
2. ຕໍ່ກັບບຸກຄົນ ຫຼື ນິຕິບຸກຄົນໃດ ທີ່ມີຈຸດປະສົງເຂົ້າ-ອອກ ຢູ່ດ່ານສາກົນພູເກືອ ແຂວງອັດຕະປື ໃນໄລຍະແຕ່ວັນທີ 28 ທັນວາ 2020 ຫາ 31 ມັງກອນ 2020 ແມ່ນໃຫ້ປະຕິບັດຕາມ ຄຳແນະນຳຂອງກະຊວງການຕ່າງປະເທດ (ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19) ສະບັບເລກທີ 2857/ຕປທ.ສພກ, ລົງວັນທີ 16 ທັນວາ 2020 ແລະ ປະຕິບັດມາດຕະການປ້ອງກັນຢ່າງເຂັ້ມງວດເຊັ່ນ: ຕ້ອງມີໃບຢັ້ງຢືນການກວດເຊື້ອພະຍາດ COVID-19 ດ້ວຍເຄື່ອງ PCR 72 ຊົ່ວໂມງ ກ່ອນເດີນທາງອອກນອກປະເທດ ໂດຍມອບໃຫ້ເຈົ້າໜ້າທີ່ແພດ ແລະ ເຈົ້າໜ້າທີ່ ປະຈຳດ່ານເປັນຜູ້ກວດກາຕົວຈິງ ແລະ ເມື່ອມາຮອດແຂວງອັດຕະປືແລ້ວ ຈະຕ້ອງໄດ້ກວດເຊື້ອພະຍາດCOVID-19 ດ້ວຍເຄື່ອງ PCR ແລະ ກັກຕົວ ຢູ່ສູນຈຳກັດບໍລິເວນ, ໂຮງແຮມທີ່ຄະນະສະເພາະກິດກຳນົດອອກ ໃຫ້ຄົບ 14 ວັນ.
3. ໃຫ້ປະຕິບັດການເກັບຄ່າບໍລິການກວດ ແລະ ປິ່ນປົວພະຍາດ COVID-19 ຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສາທາລະນະສຸກ ສະບັບເລກທີ 3439/ສທ ນະຄອນຫຼວງວຽງຈັນ ວັນທີ 22 ທັນວາ 2020 ແລະ ມອບໃຫ້ພະແນກ ສາທາລະນະສຸກແຂວງໃນນາມກອງເລຂາຄະນະສະເພາະກິດຂັ້ນແຂວງ ອອກຄຳແນະນຳ ແລະ ການກຳນົດການໃຊ້ຈ່າຍລະອຽດຕາມຂໍ້ກຳນົດທີ່ເປັນເອກະພາບທົ່ວປະເທດ ແລະ ການໃຊ້ຈ່າຍຕົວຈິງໃນທ້ອງຖິ່ນ.
4. ໃຫ້ປະຕິບັດຕາມແຈ້ງການ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1203/ອຄ ສພກ, ນະຄອນຫຼວງວຽງຈັນ ວັນທີ 24 ທັນວາ 2020 ວ່າດ້ວຍການໂຈະການນຳເຂົ້າຊີ້ນຄາວ ອາຫານທະເລ (ສົດ, ແຊ່ແຂງ) ທີ່ມາຈາກປະເທດທີ່ມີການລະບາດຂອງພະຍາດພະຍາດ COVID-19ມອບໃຫ້ ພະແນກສາທາລະນະສຸກແຂວງ ໃນນາມກອງເລຂາຄະນະສະເພາະກິດຂັ້ນແຂວງ ທັນເປັນແຈ້ງການຢ່າງລະອຽດ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.
5. ສືບຕໍ່ປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນ (ດ່ານພູຍາງ: ເມືອງພູວົງ, ດ່ານຟັໜັ່ງ: ເຂດວັງຕັດ ເມືອງຊານໄຊ, ດ່ານເຊປຽນ: ເມືອງສະໜາມໄຊ, ດ່ານ ຟ1, ຟ3, ຟ4, ຟ5 ແລະ ຟ6) ສຳລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ ແລະ ການຂົນສົ່ງສິນຄ້າ; ສ່ວນດ່ານສາກົນພູເກືອ-ເບີອີ (ແຂວງອັດຕະປື ສປປ ລາວ-ແຂວງກອນຕູມ ສສ ຫວຽດນາມ) ກໍ່ສືບຕໍ່ປິດສຳລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ, ຍົກເວັ້ນພົນລະເມືອງລາວ, ຊາວຕ່າງປະເທດ ທີ່ມີຄວາມຈຳເປັນອັນຮີບດ່ວນ ໃນການເດີນທາງເຂົ້າ-ອອກ ແຂວງອັດຕະປື ສປປລາວ ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ (ກະຊວງການຕ່າງປະເທດ), ສຳລັບການຂົນສົ່ງສິນຄ້າ ຜ່ານດ່ານສາກົນພູເກືອ ແມ່ນສາມາດເຂົ້າ-ອອກ ໄດ້ຕາມປົກກະຕິ ແຕ່ຕ້ອງປະຕິບັດມາດຕະການໃນການປ້ອງກັນຢ່າງເຂັ້ມງວດເຊັ່ນ: ມີການຊັບປ່ຽນພະນັກງານຂັບລົດ, ມີການພົ່ນຢາຂ້າເຊື້ອ ແລະ ມາດຕະການອື່ນໆ ຢ່າງເຂັ້ມງວດ.
6. ບໍ່ອະນຸຍາດໃຫ້ຈັດງານຄອນເສີດ, ງານລາຕີສະໂມສອນ ແລະ ງານສະຫຼອງປີໃໝ່ສາກົນ ທີ່ຈັດເປັນງານໃຫຍ່ ໂດຍເຫັນດີໃຫ້ສະຫຼອງຢູ່ກັບເຮືອນ ພາຍໃນຄອບຄົວຂອງໃຜລາວ, ລວມທັງການສູດມົນຂ້າມປີ (ຫາກຈະຈັດຕັ້ງການສູດມົນ ກໍ່ໃຫ້ຈັດແບບກະທັດຮັດ ແລະ ຕ້ອງປະຕິບັດຕາມມາດຕະການປ້ອງກັນການແຜ່ລະບາດຂອງພະຍາດ

COVID-19ທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ), ສໍາລັບງານດອງ ກໍ່ໃຫ້ຈັດແບບກະທັດຮັດ ແລະ ປະຢັດ ມັດທະຍັດ ຕາມຮີດຄອງປະເພນີອັນດີງາມຂອງລາວເຮົາ.

7. ໃຫ້ພະແນກສາທາລະນະສຸກແຂວງ ກອງເລຂາຄະນະສະເພາະກິດຂັ້ນແຂວງ ປະສານສົມທົບກັບ ເມືອງ 5 ເມືອງ ແລະ ພະແນກການກ່ຽວຂ້ອງ ສືບຕໍ່ເພີ່ມທະວີການໂຄສະນາເຜີຍແຜ່ໃຫ້ທຸກຄົນໃນສັງຄົມເຂົ້າໃຈວ່າ: ເຖິງແມ່ນວ່າ ປະເທດເຮົາບໍ່ມີການລະບາດ ເວົ້າລວມ ເວົ້າສະເພາະ ຢູ່ແຂວງອັດຕະປື ບໍ່ມີການລະບາດ ແລະ ບໍ່ມີກໍລະນີຕິດເຊື້ອ ພະຍາດ COVID-19 ກໍ່ຕາມ ແຕ່ຢູ່ບາງປະເທດໃກ້ຄຽງ ແລະ ຫຼາຍປະເທດໃນໂລກ ຍັງມີການລະບາດຢ່າງຮຸນແຮງ ຍ້ອນແນວນັ້ນ ຈຶ່ງຮຽກຮ້ອງໃຫ້ພົນລະເມືອງລາວ ແລະ ທຸກຄົນ ທີ່ອາໃສ ຢູ່ແຂວງອັດຕະປື ສປປລາວ ຕ້ອງຍົກສູງ ສະຕິຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂ ການ ແຜ່ລະບາດຂອງພະຍາດ COVID-19 ຢ່າງເປັນເຈົ້າການຮ່ວມກັນ.

8. ມອບໃຫ້ ກອງບັນຊາການ ປກຊ-ປກສ ແຂວງ, ເມືອງ 5 ເມືອງ ເພີ່ມທະວີການຕິດຕາມກວດກາ ການເຂົ້າ-ອອກ ຢູ່ ດ່ານສາກົນພູເກືອ, ລາດຕະເວນຕາມຊາຍແດນ ຮັບປະກັນບໍ່ໃຫ້ມີການເຂົ້າ-ອອກແບບຊະຊາຍ ຫຼື ມີການລັກລອບ ເຂົ້າ-ອອກ ບໍ່ຜ່ານດ່ານຊາຍແດນສາກົນພູເກືອ ເພື່ອຮັບປະກັນບໍ່ໃຫ້ມີຄວາມສ່ຽງນໍາເຊື້ອພະຍາດເຂົ້າມາແຜ່ລະບາດ ໃນຊຸມຊົນ.

- ສໍາລັບການປະຕິບັດມາດຕະການຕໍ່ຜູ້ລັກລອບເຂົ້າ-ອອກເມືອງ ມອບໃຫ້ພະແນກສາທາລະນະສຸກແຂວງປະສານ ສົມທົບກັບກອງບັນຊາການ ປກສ ແຂວງ ແລະ ດ່ານສາກົນພູເກືອ ອອກລະບຽບການ ຫຼື ອອກຄໍາແນະນໍາ ວິທີ ການຈັດຕັ້ງປະຕິບັດເປັນອັນສະເພາະຕື່ມ, ຊຶ່ງປະຕິບັດຕາມດໍາລັດຂອງນາຍົກລັດຖະມົນຕີ ແຫ່ງ ສປປລາວ ສະບັບ ເລກທີ 136/ນຍ ວ່າດ້ວຍການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ແລະ ການຄຸ້ມຄອງຄົນຕ່າງປະເທດ ແລະ ປະຕິບັດຕາມຫຼັກວິຊາການ ການແພດຂອງກອງເລຂາຄະນະສະເພາະກິດຂັ້ນແຂວງ.

9. ມອບໃຫ້ພະແນກສາທາລະນະສຸກແຂວງ ໃນນາມກອງເລຂາຄະນະສະເພາະກິດຂັ້ນແຂວງປະສານສົມທົບກັບກອງ ບັນຊາການ ປກຊ-ປກສ ແຂວງ, ພະແນກ ຮສສ ແຂວງ ຕິດຕາມກວດກາຢ່າງໃກ້ຊິດ ແລະ ເຂັ້ມງວດຕໍ່ການເຂົ້າ-ອອກຂອງແຮງງານທີ່ມາຈາກຕ່າງແຂວງ ແລະ ຕ່າງປະເທດ ທີ່ມາອອກແຮງງານຢູ່ບັນດາບໍລິສັດ ນໍ້າຕານ-ອ້ອຍທີທີຊີ, ບໍລິສັດ385, ບໍລິສັດຮວ່າງແອ້ງອັດຕະປື, ຕາມສວນກ້ວຍ ແລະ ໂຄງການກໍ່ສ້າງເຂື່ອນໄຟຟ້າ ແລະ ອື່ນໆ....

10. ມອບໃຫ້ພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ, ເມືອງ 5 ເມືອງ ສືບຕໍ່ເພີ່ມທະວີບົດບາດການ ຄຸ້ມຄອງ, ການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂ ການແຜ່ລະບາດຂອງພະຍາດ COVID-19 ໃນຂອບເຂດທີ່ຕົນຮັບຜິດຊອບ ແລະ ລາຍງານໃຫ້ຂັ້ນ ເທິງຂອງຕົນຮັບຊາບ ຢ່າງເປັນປົກກະຕິ ແລະ ທັນເວລາ.

11. ສໍາລັບບຸກຄົນທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງທີ່ໄດ້ຮັບສິດເຂົ້າມາ ແຂວງອັດຕະປື ສປປລາວ, ຕ້ອງໃສ່ອຸປະກອນຕິດຕາມທາງການແພດ ເພື່ອໃຫ້ສາມາດຕິດຕາມການເຄື່ອນໄຫວຂອງບຸກຄົນດັ່ງກ່າວໄດ້; ມອບ ໃຫ້ກອງເລຂາຄະນະສະເພາະກິດຂັ້ນແຂວງ ປະສານກັບສູນກາງ ໃນການຄົ້ນຄວ້າລະບຽບການ ແລະ ຄິດໄລ່ຄ່າໃຊ້ ຈ່າຍໃນການນໍາໃຊ້ອຸປະກອນຕິດຕາມດັ່ງກ່າວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ.

12. ໃຫ້ພະແນກສາທາລະນະສຸກແຂວງໃນນາມກອງເລຂາຄະນະສະເພາະກິດຂັ້ນແຂວງ ຄົ້ນຄວ້າ, ກໍານົດ, ປັບປຸງ ແລະ ຟື້ນຟູຄືນບັນດາສະຖານທີ່ຈໍາກັດບໍລິເວນ ຢູ່ຂັ້ນແຂວງ, ຂັ້ນເມືອງ ເພື່ອເປັນບ່ອນຈໍາກັດບໍລິເວນ ແລະ ປິ່ນປົວຜູ້ ຕິດເຊື້ອ ໃນກໍລະນີຜູ້ທີ່ເດີນທາງມາຈາກຕ່າງປະເທດຈໍານວນຫຼາຍ ໂດຍສະເພາະແມ່ນແຮງງານລາວ ທີ່ຕົກຄ້າງຢູ່

ຕ່າງປະເທດ, ພ້ອມນີ້ຕ້ອງໄດ້ກຳນົດມາດຕະການຕໍ່ຜູ້ທີ່ລະເມີດ, ຂໍ້ຫ້າມຕ່າງໆ ຂອງຄະນະສະເພາະກິດແຕ່ລະຂັ້ນຢ່າງເຄັ່ງຄັດ.

13. ໃຫ້ພະແນກສາທາລະນະສຸກແຂວງ ກອງເລຂາຄະນະສະເພາະກິດຂັ້ນແຂວງ ສົມທົບຄະນະສະເພາະກິດຂັ້ນສູນກາງ ໃນການຄົ້ນຄວ້າ ແລະ ກຳນົດເງື່ອນໄຂການຊື້ປະກັນໄພ COVID-19 ສຳລັບຄົນຕ່າງປະເທດທີ່ຈະເດີນທາງເຂົ້າມາແຂວງອັດຕະປື.

14. ໃຫ້ພະແນກສາທາລະນະສຸກແຂວງ ກອງເລຂາຄະນະສະເພາະກິດຂັ້ນແຂວງ ປະສານສົມທົບຢ່າງຕໍ່ເນື່ອງກັບຄະນະສະເພາະກິດຂັ້ນສູນກາງ ທີ່ລັດຖະບານໄດ້ສືບຕໍ່ປະສານງານກັບປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ຕິດຕາມການຄົ້ນຄວ້າວັກຊີນປ້ອງກັນພະຍາດດັ່ງກ່າວ ທີ່ປະຈຸບັນຍັງຢູ່ໃນການທົດລອງ ເພື່ອໃຫ້ໄດ້ມານຳໃຊ້ໃນແຂວງອັດຕະປືຂອງພວກເຮົາ ຄາດຄະເນນຳໃຊ້ໄວເທົ່າທີ່ຈະໄວໄດ້; ຄະນະສະເພາະກິດ ຕ້ອງໄດ້ເກັບກຳຂໍ້ມູນທີ່ກ່ຽວຂ້ອງ ພ້ອມທັງສ້າງແຜນຄວາມຕ້ອງການນຳໃຊ້ວັກຊີນດັ່ງກ່າວ ມາບໍລິການພໍ່ແມ່ປະຊາຊົນຊາວແຂວງອັດຕະປືຢ່າງທົ່ວເຖິງ.

15. ມອບໃຫ້ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ປະສານສົມທົບກັບເມືອງສາມັກຄີໄຊ, ເມືອງໄຊເຊດຖາ, ເມືອງອື່ນໆ, ກອງບັນຊາການ ປກສ ແຂວງ ແລະ ພາກສ່ວນກ່ຽວຂ້ອງຂອງແຂວງຄຸ້ມຄອງບັນດາຮ້ານບັນເທີງ ແລະ ຄາຣາໂອເກະ ໂດຍໃຫ້ປະຕິບັດໂມງເວລາ ເປີດ-ປິດ ຕາມດຳລັດວ່າດ້ວຍການບັນເທີງ ສະບັບເລກທີ 315/ລບ, ລົງວັນທີ 2 ຕຸລາ 2017 ເພື່ອປະຕິບັດມາດຕະການປ້ອງກັນການຕິດເຊື້ອ, ການແຜ່ເຊື້ອ ແລະ ຮັກສາຄວາມສະອາດສະຖານທີ່ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ຮອງເຈົ້າແຂວງ
ປະທານຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ
ແລະ ແກ້ໄຂການລະບາດພະຍາດ COVID-19 ຂັ້ນແຂວງ

ບຸນເສີດ ເສດທິລາດ

ບ່ອນສົ່ງ:
- ພາກສ່ວນກ່ຽວຂ້ອງ) ພາກສ່ວນລະ 1 ສະບັບ.
- ສາເນົາໄວ້ ( ສຳເນົາ ) 1 ສະບັບ.